BCEL·KT KT·ZMICO

# ບົດລາຍງານບໍລິສັດ

ວັນທີ 31 ຕຸລາ 2013

## ບໍລິສັດ ຜະລິດ ໄຟຟ້າ ລາວ ມະຫາຊົນ (EDL-Gen)

ລາຄາເປົ້າໝາຍ 8,825 ກີບ

## ກຳໄລສຸດທິຂອງໄຕມາດທີ 3 ຂອງປີ 2013 ສູງຂຶ້ນຫຼາຍ

ລາຄາ 6,100 ກີບ

ພວກເຮົາຍັງໝັ້ນໃຈວ່າ ກຳໄລຂອງບໍລິສັດມີທ່າອ່ຽງທີ່ດີຂຶ້ນ, ໂດຍກຳໄລຕໍ່ຮຸ້ນ (EPS) ໃນລະຫວ່າງປີ 2013-2014 ຄາດວ່າຈະຂະຫຍາຍຕົວ ດ້ວຍອັດຕາການຂະຫຍາຍຕົວສະເລ່ຍຕໍ່ປີ (CAGR) 22%, ຍ້ອນກຳໄລທີ່ສູງຂຶ້ນຈາກ 7 ເຂື່ອນໄຟຟ້າຂອງບໍລິສັດ ແລະ ການປະກອບສ່ວນໃນກຳໄລທີ່ສູງຂຶ້ນຈາກການຮ່ວມທຶນ. ພ້ອມດຽວກັນນີ້, ອັດຕາເງິນປັນຜົນທີ່ສະໝໍ່າສະເໝີ ຊຶ່ງຢູ່ທີ່ 8-9% ຕໍ່ປີ ແລະ ຄວາມອາດສາມາດໃນການຂະຫຍາຍກຳລັງການຜະລິດຢູ່ ສ.ປ.ປ. ລາວ (ຍ້ອນການລົງທຶນຂອງວິສາຫະກິດໄຟຟ້າລາວ), ເຮັດໃຫ້ພວກເຮົາຍັງຄົງແນະນຳໃຫ້ " ຊື້ " ຮຸ້ນນີ້ຢູ່.

### ຄວາມຈິງ ແລະ ຕົວເລກ

- EDL-Gen ໄດ້ລາຍງານກຳໄລສຸດທິໃນໄຕມາດທີ 3 ຂອງປີ 2013 ທີ່ບໍ່ທັນໄດ້ຮັບການກວດສອບໄວ້ຢູ່ທີ່ 376,905 ລ້ານກີບ (ສູງຂຶ້ນ 97% ທຽບກັບປີແລ້ວນີ້, ສູງຂຶ້ນ 54% ທຽບກັບໄຕມາດແລ້ວນີ້), ຍ້ອນກຳໄລຈາກເຂື່ອນໄຟຟ້າຂອງບໍລິສັດທີ່ມີຢູ່ແລ້ວ ເປັນແຮງຂັບເຄື່ອນຫຼັກ.
- ຖ້າບໍ່ລວມເອົາການຂາດທຶນຈາກອັດຕາແລກປ່ຽນທີ່ມີເຖິງ 12,170 ລ້ານກີບແລ້ວ, ບໍລິສັດມີກຳໄລຕົ້ນຕໍເຖິງ 389,075 ລ້ານກີບ (+102% ທຽບກັບປີແລ້ວນີ້, +59% ທຽບກັບໄຕມາດແລ້ວນີ້) ໃນໄຕມາດທີ 3 ຂອງປີ 2013, ຍ້ອນກຳໄລທີ່ເພີ່ມຂຶ້ນຢ່າງສະໝໍ່າສະເໝີຈາກ 7 ເຂື່ອນໄຟຟ້າທີ່ມີຢູ່ແລ້ວ ຊຶ່ງເຮັດໃຫ້ລາຍໄດ້ຈາກການຂາຍໄຟຟ້າປະຈຳໄຕມາດ ສູງຮອດ 333,858 ລ້ານກີບ (ຊຶ່ງເກືອບທຳລາຍສະຖິຕິສູງສຸງໃນໄຕມາດທີ 3 ຂອງປີ 2011 ຢູ່ທີ່ 341,066 ລ້ານກີບ) ແລະ ກຳໄລທີ່ສູງຈາກການຮ່ວມທຶນ (ໃນ 4 ເຂື່ອນໄຟຟ້າເອກກະລາດ (IPP) ທີ່ໄດ້ໂອນຮຸ້ນມາ).

### ວິເຄາະ

- ກຳໄລຕົ້ນຕໍຈາກ 7 ເຂື່ອນໄຟຟ້າພະລັງນ້ຳທີ່ມີຢູ່ແລ້ວ ໄດ້ຂະຫຍາຍຕົວຢ່າງເຂັ້ມແຂງເຖິງ 28.5% ທຽບກັບປີແລ້ວນີ້ ແລະ 166% ທຽບກັບໄຕມາດແລ້ວນີ້ໄປຢູ່ທີ່ 247,623 ລ້ານກີບ ໃນໄຕມາດທີ 3 ຂອງປີ 2013, ຍ້ອນການຜະລິດໄຟຟ້າທີ່ສູງຕາມລະດູການ ພາຍຫຼັງທີ່ປະລິມານນ້ຳຝົນໄດ້ບັນລຸສະຖິຕິສູງສຸດໃນປີນີ້. ສັງເກດວ່າກຳໄລຕົ້ນຕໍໃນ 9 ເດືອນຂອງປີ 2013 ແມ່ນມີເຖິງ 404,959 ລ້ານກີບ, ຊຶ່ງກວມເອົາເຖິງ 85% ຂອງການຄາດຄະເນທັງໝົດປີຂອງພວກເຮົາ.
- ການປະກອບສ່ວນຂອງກຳໄລທີ່ໄດ້ຈາກການຮ່ວມທຶນໄດ້ຫຼຸດລົງເລັກນ້ອຍ 6.5% ທຽບກັບໄຕມາດແລ້ວນີ້ ໄປຢູ່ທີ່ 141,452 ລ້ານກີບໃນໄຕມາດທີ 3 ຂອງປີ 2013, ຊຶ່ງສ່ວນໃຫຍ່ໄດ້ຮັບການສະໜັບສະໜູນຈາກກຳໄລຈາກເຂື່ອນ ເທີນ-ຫີນບູນ ແລະ ນ້ຳງື່ມ 2. ໃນຂະນະດຽວກັນ, ກຳໄລໃນ 9 ເດືອນຂອງປີ 2013 ຈາກ 4 ເຂື່ອນໄຟຟ້າເອກກະລາດທີ່ໄດ້ໂອນຮຸ້ນ

**ຂໍ້ມູນຫຼັກຊັບ**

| | |
|---|---|
| ລະຫັດຫຼັກຊັບຢູ່ LSX / Bloomberg | EDL-Gen/EDL LS |
| ຂະແໜງທຸລະກິດ | ພະລັງງານ |
| ລາຄາປິດ (US$, ກີບ) | 0.81/6,300 |
| ຈຳນວນຮຸ້ນຈົດທະບຽນ (ລ້ານຮຸ້ນ) | 1,226.22 |
| ມູນຄ່າຕະຫຼາດ (ຕື້ກີບ/ລ້ານ US$) | 7,602.54/962.04 |
| ຕ່າງປະເທດຖືຮຸ້ນບໍ່ເກີນ/ຕົວຈິງ (%) | 20%/13.98% |
| ລາຄາສູງສຸດ/ຕ່ຳສຸດພາຍໃນ 52 ອາທິດ (ກີບ) | 7,000/5,000 |
| ປະລິມານຊື້-ຂາຍຮຸ້ນສະເລ່ຍຕໍ່ວັນ (1,000 ຮຸ້ນ) | 47.17 |
| ຮຸ້ນທີ່ເຄື່ອນໄຫວໃນຕະຫຼາດ (%) | 13.98 |
| Beta | 1.09 |

**ຜູ້ຖືຮຸ້ນລາຍໃຫຍ່**

| | |
|---|---|
| ລັດວິສາຫະກິດໄຟຟ້າລາວ | 75.00% |
| Ratch-Lao Service | 6.46% |
| RH International (Singapore) | 2.88% |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 2.68% |

*ແຫຼ່ງຂໍ້ມູນ: http:www.eldgen.com.la*

**ການປ່ຽນແປງລາຄາ (%)**

| | 1M | 2M | 12M |
|---|---|---|---|
| ທຽບກັບຕົວຮຸ້ນເອງ | 34.68 | 33.60 | 67.00 |
| ທຽບກັບ LSX | 37.02 | 37.19 | 38.49 |




**ຄວາມເປັນມາຂອງບໍລິສັດ**

EDL-Gen ເປັນເຈົ້າຂອງ/ເປັນຜູ້ບໍລິຫານຊັບສິນເຂື່ອນໄຟຟ້າທັງໝົດທີ່ແຍກອອກຈາກ EDL

**ໝາຍເຫດ:**

ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ເປັນຜູ້ຄ້ຳປະກັນການຈັດຈຳໜ່າຍຮຸ້ນ EDL-Gen. ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ເປັນບໍລິສັດຮ່ວມທຶນລະຫວ່າງທະນາຄານ BCEL ແລະ ບໍລິສັດຫຼັກຊັບ KT-ZMICO (ປະເທດໄທ).


Patcharin Karsemarnuntana
KT ZMICO Research
Indochina Energy
Patcharink@ktzmico.com
+66 02 695-5837

ມາ ແມ່ນມີເຖິງ 348,708 ລ້ານກີບ, ຊຶ່ງກວມເອົາ 89% ຂອງການຄາດຄະເນໝົດປີຂອງພວກເຮົາ.

- ອັດຕາສ່ວນກຳໄລສຸດທິໃນໄຕມາດທີ 3 ຂອງປີ 2013 ທຽບປີຕໍ່ປີ ແລະ ໄຕມາດຕໍ່ໄຕມາດ ຕ່າງກໍ່ສູງຢູ່ທີ່ 85% ຍ້ອນລາຍໄດ້ຈາກການຂາຍໄຟຟ້າຂອງ 7 ເຂື່ອນໄຟຟ້າທີ່ມີຢູ່ແລ້ວທີ່ສູງຂຶ້ນ ແລະ ຄ່າໃຊ້ຈ່າຍທີ່ສາມາດຄວບຄຸມໄດ້.
- ຍ້ອນກຳໄລຕົ້ນຕໍໃນ 9 ເດືອນຂອງປີ 2013 ທີ່ມີເຖິງ 753,667 ລ້ານກີບ ແລະ ກຳໄລສຸດທິ ໃນ 9 ເດືອນ ຂອງປີ 2013 ທີ່ມີເຖິງ 787,578 ລ້ານກີບ ໄດ້ກວມເອົາເຖິງ 87% ແລະ 91% ຂອງການຄາດຄະເນໝົດປີຂອງພວກເຮົາ , ພວກເຮົາເຊື່ອວ່າການຄາດຄະເນໝົດປີຂອງພວກເຮົາອາດຈະບັນລຸເປົ້າໝາຍ ໂດຍຍັງມີຄວາມສ່ຽງບາງຈຳນວນທີ່ສູງຂຶ້ນເຊັ່ນດຽວກັນ.

**ການເງິນ ແລະ ການປະເມີນຜົນ**

| ທ້າຍປີ ວັນທີ 31 ທັນວາ | 2011 | 2012 | 2013E | 2014E |
|---|---|---|---|---|
| ລາຍຮັບ (ລ້ານກີບ) | 887,634 | 913,103 | 1,182,606 | 1,227,918 |
| ກຳໄລສຸດທິ (ລ້ານກີບ) | 563,568 | 602,469 | 864,973 | 901,721 |
| ກຳໄລຕໍ່ຮຸ້ນ (EPS) (ກີບ) - weighted | 681.76 | 590.08 | 705.40 | 735.37 |
| EPS (ກີບ) - FD | 648.83 | 491.32 | 705.40 | 735.37 |
| ການຂະຫຍາຍຕົວຂອງ EPS (%) | na. | (24.3) | 43.6 | 4.2 |
| ເງິນປັນຜົນຕໍ່ຮຸ້ນ (ກີບ) | 497.97 | 450.00 | 529.05 | 551.53 |
| ມູນຄ່າຕາມບັນຊີ (ກີບ) | 4,512.41 | 4,560.64 | 4,736.99 | 4,920.83 |

| ທ້າຍປີວັນທີ 31 ທັນວາ | 2011 | 2012 | 2013E | 2014E |
|---|---|---|---|---|
| ລາຄາຕໍ່ກຳໄລ (PER) (ເທົ່າ) | 10.4 | 13.7 | 8.9 | 8.6 |
| ລາຄາຕໍ່ມູນຄ່າຕາມບັນຊີ (PBV) (ເທົ່າ) | 1.5 | 1.5 | 1.3 | 1.3 |
| ອັດຕາສ່ວນ ມູນຄ່າບໍລິສັດ/ກຳໄລກ່ອນຫັກດອກເບ້ຍ, ອາກອນ, ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ (EV/EBITDA) (ເທົ່າ) | 7.4 | 6.7 | 7.5 | 7.0 |
| ອັດຕາເງິນປັນຜົນ (%) | 7.9 | 7.1 | 8.4 | 8.8 |
| ລາຍໄດ້ຜູ້ຖືຮຸ້ນ (ROE) (%) | 17.2 | 12.7 | 15.2 | 15.2 |
| Net Gearing (%) | 24.0 | 15.8 | 8.7 | 4.3 |

## ຕາຕະລາງທີ 1: ຜົນກຳໄລຂອງໄຕມາດທີ 3 ປີ 2013

| ສະຫຼຸບທາງການເງິນ<br>ຫົວໜ່ວຍ: ລ້ານກີບ | 3Q12 | 2Q13 | 3Q13 | %YoY | %QoQ | 9M13 | % YoY | 2013E | %YoY | YTD<br>(% 13E) |
|---|---|---|---|---|---|---|---|---|---|---|
| ຍອດຂາຍໄຟຟ້າ | 272,355 | 173,220 | 333.858 | 22.6 | 92.7 | 648,426 | 6.4 | 788,859 | 1.2 | 82.2 |
| ຕົ້ນທຶນ | (46,503) | (50,437) | (48.916) | 5.2 | (3.0) | (147,058) | 8.5 | (199,160) | 7.1 | 73.8 |
| ກຳໄລຂັ້ນຕົ້ນ | 225,852 | 122,783 | 284,942 | 26.2 | 132.1 | 501,368 | 5.8 | 589,699 | (0.7) | 85.0 |
| ກຳໄລຈາກການຮ່ວມທຶນ | | 151,338 | 141,452 | Na | (6.5) | 348,708 | Na | 390,066 | 269.4 | 89.4 |
| ລາຍໄດ້ຈາກເງິນປັນຜົນ | | | | | | | | 2,636 | nm | 0.0 |
| ລາຍໄດ້ອື່ນໆ | 446 | 2,067 | 1,847 | 314.1 | (10.6) | 4,810 | 55.6 | 1,045 | (77.3) | 460.1 |
| ກຳໄລຈາກອັດຕາແລກປ່ຽນ | (1,165) | 342 | (12,170) | 944.6 | Nm | 33,911 | 1,202 | 0 | (100.0) | Nm |
| **ລາຍຮັບທັງໝົດ** | **271,636** | **326,967** | **464,987** | 71.2 | 42.2 | **1,035,855** | **68.4** | **1,182,606** | 29.5 | 87.6 |
| ກຳໄລກ່ອນຫັກຄ່າໃຊ້ຈ່າຍ | 225,133 | 276,530 | 416,071 | 84.8 | 50.5 | 888,797 | 85.4 | 983,446 | 35.3 | 90.4 |
| ຄ່າໃຊ້ຈ່າຍໃນການດຳເນີນງານ | (13,682) | (20,287) | (17,311) | 26.5 | (14.7) | (52,715) | 16.1 | (60,870) | (1.6) | 86.6 |
| **ກຳໄລກ່ອນຫັກດອກເບ້ຍ ແລະ ອາກອນ** | **211,451** | **256,243** | **398,760** | 88.6 | 55.6 | **836,082** | **92.7** | **922,576** | 38.7 | 90.6 |
| ດອກເບ້ຍ | (9,787) | (6,939) | (9,541) | (2.5) | 37.5 | (25,443) | (8.7) | (32,469) | (9.0) | 78.4 |
| ອາກອນກຳໄລ | (10,065) | (4,555) | (12,314) | 22.3 | 170.3 | (23,061) | 12.5 | (25,134) | (7.3) | 91.8 |
| **ກຳໄລສຸດທິຂອງປີ** | **191,599** | **244,749** | **376,905** | 96.7 | 54.0 | **787,578** | **104.2** | **864,973** | 43.6 | 91.1 |
| **ກຳໄລຕໍ່ຮຸ້ນ (EPS) - (FD)*** | **156.25** | **199.60** | **307.37** | 96.7 | 54.0 | **642.28** | 69.4 | 705.40 | 43.6 | 91.1 |
| ອັດຕາສ່ວນກຳໄລຂັ້ນຕົ້ນ (%)** | 82.9 | 70.9 | 85.3 | | | 77.3 | | 76.8 | | |
| ອັດຕາສ່ວນ EBITDA (%) | 92.3 | 91.4 | 94.3 | | | 92.5 | | 92.2 | | |
| ອັດຕາສ່ວນກຳໄລສຸດທິ (%) | 70.5 | 74.9 | 81.1 | | | 76.0 | | 73.1 | | |
| ອັດຕາສ່ວນລາຍໄດ້ຜູ້ຖືຮຸ້ນ (ROE)(%) | 16.6 | 17.1 | 26.3 | | | 18.1 | | 15.2 | | |
| ອັດຕາສ່ວນດອກເບ້ຍ/ສ່ວນຂອງຜູ້ຖືຮຸ້ນ(ເທົ່າ) | 0.2 | 0.1 | 0.1 | | | 0.1 | | 0.2 | | |

ໝາຍເຫດ: * ຕົວເລກຕໍ່ຮຸ້ນແມ່ນອີງຕາມຈຳນວນຮຸ້ນ 1,226.22 ລ້ານຮຸ້ນ
** ອັດຕາສ່ວນກຳໄລຂັ້ນຕົ້ນ = ກຳໄລຈາກການດຳເນີນງານ / ຍອດຂາຍໄຟຟ້າ

ແຫຼ່ງຂໍ້ມູນ: KTZmico Research